
ບົດຮຽນທີ 12 ສຳລັບສະບາໂຕທີ 21 ມີນາ, 2026
ການໃຊ້ຊີວິດຢູ່
ຮ່ວມກັບຄົນອື່ນ








“ຈົ່ງໃຫ້ວາຈາຂອງເຈົ້າທັງຫລາຍ
ປະກອບດ້ວຍເມດຕາຄຸນ ຢູ່ສະເ
ໝີ ປະສົມດ້ວຍເກືອ ເພື່ອເຈົ້າ
ທັງຫລາຍຈະໄດ້ຮູ້ວິທີຕອບທີ່ຖືກ
ໃຈແກ່ທຸກຄົນ” ກລຊ 4:6

ໃນສ່ວນທີ່ເນັ້ນການປະຕິບັດໂຕຈິງຂອງຈົດໝາຍສະບັບນີ້, ອຈ.ໂປໂລ ໄດ້ກ່າວເຖິງຄວາມສຳຄັນຂອງຄວາມສຳພັນລະຫວ່າງບຸກຄົນຕ່າງໆ.

ການຢູ່ຮ່ວມກັນອາດຈະກໍ່ໃຫ້ເກີດຄວາມຕຶງຄຽດ ແລະ ເກີດການໂຕ້ຖຽງໄດ້. ດັ່ງນັ້ນຈຶ່ງຈຳເປັນຕ້ອງໄດ້ມີຄວາມປອງດອງ, ຄວາມເປັນພ້ອງເປັນໜຶ່ງດຽວ, ເປົ້າໝາຍ ແລະ ວັດຖຸປະສົງ.

ອຈ.ໂປໂລ ໄດ້ໃຫ້ຫລັກການທີ່ເປັນປະໂຫຍດແກ່ພວກເຮົາໃນການປັບປຸງຄວາມສຳພັນລະຫວ່າງຄູ່ສົມຣົດ, ລະຫວ່າງພໍ່ແມ່ກັບລູກ, ລະຫວ່າງນາຍຈ້າງກັບລູກຈ້າງ, ລະຫວ່າງພີ່ນ້ອງໃນຄຣິດຕະຈັກ ແລະ ລະຫວ່າງຜູ້ເຊື່ອກັບຜູ້ທີ່ບໍ່ເຊື່ອ





- ຄວາມສຳພັນລະຫວ່າງຄູ່ສົມຣົດ (ກລຊ. 3:18-19)
- ຄວາມສຳພັນລະຫວ່າງພໍ່ແມ່ ແລະ ລູກ (ກລຊ 3:20-21)
- ຄວາມສຳພັນລະຫວ່າງ ນາຍຈ້າງ ແລະ ລູກຈ້າງ (ກລຊ 3:22-25; 4:1)
- ຄວາມສຳພັນໃນຄຣິດຕະຈັກ (ກລຊ 4:2-4)
- ຄວາມສຳພັນ ຕໍ່ຜູ້ທີ່ບໍ່ເຊື່ອ (ກລຊ 4:5-6)

# ຄວາມສຳພັນລະຫວ່າງຄູ່ສົມຣົດ

"ຝ່າຍເມຍທັງຫລາຍຈົ່ງຍອມອ່ອນນ້ອມເຊື່ອຟັງຕໍ່ຜົວຂອງຕົນ ເພາະເປັນສິ່ງສົມຄວນປະພຶດໃນອົງພຣະຜູ້ເປັນເຈົ້າ (ກລຊ 3:18-19)



ຈົດໝາຍໄປເຖິງເມືອງເອເຟໂຊ ແລະ ເມືອງໂກໂລຊາຍ ເຊິ່ງຂຽນຂຶ້ນໃນເວລາດຽວກັນ (ກລຊ 3:18-19; ອຟຊ 5:21-33).

**ພັນລະຍາຕ້ອງເຊື່ອຟັງສາມີຂອງຕົນເອງ (ກລຊ 3:18; ອຟຊ 5:22-24)**

- ການຍອມຟັງກັນ ແມ່ນຢູ່ພາຍໃຕ້ການຢຳເກງໃນພຣະຄຣິດ (ອຟຊ. 5:21)

**ສາມີ ຕ້ອງຮັກພັນລະຍາຂອງຕົນເອງ (ກລຊ 3:19; ອຟຊ 5:28)**

- ຈົ່ງຮັກພວກເຂົາໃນແບບດຽວກັນກັບທີ່ພຣະຄຣິດຮັກພວກເຮົາ (ອຟຊ 5:25)
- ຕ້ອງຮັບຜິດຊອບຕໍ່ຄວາມເປັນຢູ່ທີ່ດີຂອງພັນລະຍາ (ອຟຊ 5:29)
- ຢ່າ "ໃນຮ້າຍ" (ຢ່າເຮັດໃຫ້ພັນລະຍາຄຸມເຄືອງ, ຢ່າປະພຶດໂຫດຮ້າຍ ຫລື ໃຊ້ຄວາມຮຸນແຮງ, ຢ່າກົດຂີ່ຂົ່ມເຫັງ)









ຄູ່ສົມຣົດທັງສອງ ຄວນເຮັດວຽກຮ່ວມກັນເປັນທີມ, ປຶກສາຫາລືກັນ ແລະ ຕັດສິນໃຈຮ່ວມກັນ, ໂດຍສາມີຄວນເປັນຜູ້ນຳຄອບຄົວໃນທັງອຸດົມຄະຕິ, ວິໄສທັດ ແລະ ອະນາຄົດ. ແຕ່ລະຄົນຄວນສະແຫວງຫາ ແລະ ເຮັດໃຫ້ ອີກຝ່າຍມີຄວາມສຸກຢູ່ສະເໝີ.

“ຈົ່ງໃຫ້ຄວາມຮັກແກ່ກັນແລະກັນ ແທນທີ່ຈະຮຽກຮ້ອງຄວາມຮັກ.ຈົ່ງບົ່ມສິ່ງທີ່ດີງາມ, ສິ່ງທີ່ດີທີ່ສຸດໃນໂຕທ່ານ ແລະ ຈົ່ງພະຍາຍາມຊອກຫາຄຸນສົມບັດທີ່ດີຕໍ່ກັນແລະກັນ. ຄວາມຮູ້ສຶກວ່າໄດ້ຮັບການຊື່ນຊົມຍິນດີນັ້ນເປັນແຮງກະຕຸ້ນ ແລະ ຄວາມເພິ່ງພໍໃຈທີ່ດີ. ຄວາມເຫັນອົກເຫັນໃຈ ແລະ ຄວາມເຄົາລົບ ສົ່ງເສີມໃຫ້ມຸ່ງໝັ້ນສູ່ຄວາມເປັນເລີດ. ແລະ ຄວາມຮັກເອງກໍ່ຈະເພີ່ມພູນຂຶ້ນ ເມື່ອມັນກະຕຸ້ນໃຫ້ມຸ່ງໜ້າໄປສູ່ເປົ້າໝາຍທີ່ສູງຂຶ້ນກວ່າເກົ່າ. [...]

ພັນລະຍາຄວນເຄົາລົບສາມີ ແລະ ສາມີຄວນຮັກພັນລະຍາ, ຖະໜຸຖະໜອມພັນລະຍາ ແລະເຊັ່ນດຽວກັນກັບທີ່ໄດ້ກ່າວຄໍາປະຕິຍານໃນຕອນແຕ່ງງານ. ຜົວເມຍ ລວມເປັນໜຶ່ງດຽວກັນໃນຄວາມເຊື່ອທີ່ມີຕໍ່ພຣະຄຣິດ ເພາະສິ່ງນີ້ເຮັດໃຫ້ພຣະເຈົ້າພໍພຣະໄທ ທີ່ໄດ້ເຫັນຄູ່ສົມຣົດຮຽນຮູ້ຈັກພຣະອົງຂຶ້ນເລື້ອຍໆ ແລະ ໄດ້ຮັບການເຕີມເຕັມດ້ວຍພຣະວິນຍານ

**EGW (The Christian Home, pp. 107, 114)**

# ຄວາມສຳພັນລະຫວ່າງ ພໍ່ແມ່ ແລະ ລູກ

"ຝ່າຍລູກທັງຫລາຍ ແມ່ນໜ້າທີ່ຂອງພວກເຈົ້າໃນຖານະທີ່ເປັນຄຣິສຕຽນ ຕ້ອງນົບນ້ອມເຊື່ອຟັງພໍ່ແມ່ຂອງຕົນຢູ່ສະເໝີ ເພາະການປະພຶດຢ່າງນັ້ນ ເປັນທີ່ພໍພຣະໄທຂອງອົງພຣະຜູ້ເປັນເຈົ້າ (ກລຊ 3:20-21)



ໃນສັງຄົມປະຈຸບັນ ຄຳວ່າ "ພໍ່ແມ່" ຄວນໝາຍເຖິງຄູ່ສົມຣົດທີ່ແຕ່ງງານແລ້ວ ແລະ ຄອບຄົວທີ່ມີພຽງພໍ່ ຫລື ແມ່ລ້ຽງດ່ຽວ. ຕາມທີ່ ອຈ.ໂປໂລກ່າວ, ຄວາມສຳພັນທີ່ດີນັ້ນ ບໍ່ແມ່ນຄວາມຮັບຜິດຊອບຂອງພໍ່ແມ່ພຽງຢ່າງດຽວເທົ່ານັ້ນ ແຕ່ຍັງເປັນຄວາມຮັບຜິດຊອບຂອງລູກນຳອີກ



## ໜ້າທີ່ຂອງລູກ (ກລຊ 3:20; ອຟຊ 6:1-3)

- ການເຊື່ອຟັງຂອງລູກ ບໍ່ແມ່ນຕົວເລືອກ
- ການເຊື່ອຟັງນີ້ຢູ່ໃນພຣະບັນຍັດຂໍ້ທີ 5
- ຫລາຍໄປກວ່ານັ້ນ, ການເຊື່ອຟັງກໍ່ມີພຣະພອນເຊັ່ນກັນ

## ໜ້າທີ່ຂອງພໍ່ແມ່ (ກລຊ 3:21; ອຟຊ 6:4)

- ອົບຮົມສັ່ງສອນພວກເຂົາແບບສຸພາບ ເພື່ອບໍ່ໃຫ້ພວກເຂົາທໍ້
- ຢ່າເຮັດໃຫ້ພວກເຂົາໃຈຮ້າຍໂດຍການ ໂດຍການໃນຮ້ອນຫລືບີບບັງຄັບຂອງພວກເຮົາ
- ອົບຮົມສັ່ງສອນພວກເຂົາໃນທາງຂອງພຣະເຈົ້າ (ພບຍສ 6:6-7; ສພສ 22:6)

ການນະມັດສະການໃນຄອບຄົວ ຕອນເຊົ້າ ຫລື ຕອນແລງ ມີຄວາມສຳຄັນຫລາຍສຳລັບລູກ. ເພື່ອທີ່ຈະໃຫ້ພວກເຂົາໄດ້ຮຽນຮູ້ກ່ຽວກັບພຣະເຈົ້າແລະຕັດສິນໃຈເພື່ອຊີວິດນິຣັນດອນ ແລະ ຢ່າລືມວ່າການກະທຳຂອງພວກເຮົາເປັນແບບຢ່າງໃຫ້ແກ່ລູກ.



“ພໍ່ແມ່ທັງຫລາຍຈົ່ງສະແດງໃຫ້ລູກເຫັນວ່າ ພວກເຮົາຮັກພວກເຂົາຫລາຍປານໃດ ແລະ ຈະເຮັດທຸກຢ່າງຢ່າງສຸດຄວາມສາມາດເພື່ອໃຫ້ພວກເຂົາມີຄວາມສຸກ, ຖ້າພວກເຮົາເຮັດແບບນັ້ນ ຄໍາເວົ້າຫລືສິ່ງຫ້າມຂອງພວກເຮົາຈະມີນໍ້າໜັກຫລາຍຂຶ້ນໃນຈິດໃຈຂອງພວກເຂົາ. ຈົ່ງປົກຄອງລູກດ້ວຍຄວາມອ່ອນໂຍນ, ເຫັນອົກເຫັນໃຈ ໂດຍລະນຶກໄວ້ສະເໝີວ່າ: ເທລົ່າທູດສະຫວັນຂອງພວກເຂົາຄອຍເຝົ້າເບິ່ງຢູ່ສະເໝີ. ຖ້າວ່າພວກເຮົາປາຖະໜາທີ່ຈະໃຫ້ເຫລົ່າທູດສະຫວັນເຮັດພາລະກິດທີ່ພຣະເຈົ້າຊົງມອບໃຫ້ແກ່ພວກເຂົາ, ຈົ່ງຮ່ວມມືກັບເຫລົ່າທູດສະຫວັນໂດຍເຮັດໜ້າທີ່ໃນສ່ວນຂອງພວກເຮົາ.”

EGW (The Christian Home, p. 193)

# ຄວາມສຳພັນລະຫວ່າງເຈົ້ານາຍ ແລະ ລູກນ້ອງ

"ຝ່າຍບັນດາຜູ້ຮັບໃຊ້ ຈົ່ງຍອມຟັງນາຍຝ່າຍໂລກໃນທຸກສິ່ງ ບໍ່ແມ່ນເມື່ອຢູ່ຕໍ່ໜ້ານາຍເທົ່ານັ້ນ ເພາະຢາກໃຫ້ເພິ່ນຖືກໃຈ, ແຕ່ຈົ່ງເຮັດສິ່ງນັ້ນດ້ວຍນໍ້າໃສໃຈຈິງ ເພາະຄວາມຢຳເກງທີ່ພວກເຈົ້າມີຕໍ່ອົງພຣະຜູ້ເປັນເຈົ້າ (ກລຊ 3:22)



ຄວາມສຳພັນແບບລູກຈ້າງ ຫລື ຂ້າທາດ ສະໄໝຂອງ ອຈ ໂປໂລ ນັ້ນແຕກຕ່າງຢ່າງເຫັນໄດ້ຊັດເຈນກັບລູກຈ້າງໃນປະຈຸບັນ, ດັ່ງນັ້ນພວກເຮົາຕ້ອງເຂົ້າໃຈຄຳແນະນຳຂອງ ອຈ ໂປໂລໃນບໍຣິບົດຄວາມສຳພັນລະຫວ່າງເຈົ້ານາຍກັບລູກນ້ອງນີ້:



## ສິ່ງທີ່ຜູ້ຢູ່ພາຍໃຕ້ຄຳສັ່ງຄວນເຮັດ

(ກລຊ 3:22-25; ອຟຊ 6:5-8)

- ເຮັດດີທີ່ສຸດຢ່າງສຸດຄວາມສາມາດ, ບໍ່ວ່າຄົນຈະເຫັນຫລືບໍ່ກໍ່ຕາມ
- ຕັ້ງໃຈເຮັດວຽກ ຄືກັບວ່າເຮັດເພື່ອພຣະເຈົ້າ
- ຍອມຮັບຄຳຕັກເຕືອນ
- ວຽກທີ່ດີ ຈະໄດ້ຮັບຜົນຕອບແທນ
- ເຈົ້ານາຍທີ່ບໍ່ດີຈະເຮັດໃຫ້ພວກເຮົາຫລຸດຈາກການເປັນລູກຈ້າງ (1ປຕ 2:18)

## ສິ່ງທີ່ຜູ້ເປັນນາຍຈ້າງຄວນເຮັດ

(ກລຊ 4:1; ອຟຊ 6:9)

- ນຳພາດ້ວຍຄວາມຍຸຕິທຳ ແລະ ຊອບທຳ
- ຢ່າໃຊ້ການຂົ່ມຂູ່ ຫລື ຮຽກຮ້ອງຕາມໃຈ
- ຫົວໜ້າທຸກໆຄົນຍັງມີຫົວໜ້າທີ່ເໜືອກວ່າ, ເຊິ່ງຈະຕ້ອງຮັບຜິດຊອບຕໍ່ເຈົ້ານາຍຕົນເອງ

ສຳລັບພວກເຮົາທຸກໆຄົນແລ້ວ ບໍ່ວ່າຈະເປັນຫົວໜ້າ ຫລື ລູກນ້ອງ ກໍລ້ວນແຕ່ເປັນຄົນຮັບໃຊ້ ຂອງພຣະຄຣິດ. ເພາະພວກເຮົາຮັບໃຊ້ພຣະອົງ

"ພາລະກິດຂອງອັກຄະສາວົກ ບໍ່ແມ່ນການລົ້ມລ້າງລະບຽບທາງສັງຄົມທີ່ມີຢູ່ໂດຍທັນທີ, ເພາະການເຮັດແບບນັ້ນຈະເປັນການຂັດຂວາງຄວາມສຳເລັດຂອງພຣະຄຸນ, ແຕ່ ອຈ ໂປໂລ ໄດ້ສອນຫລັກການທີ່ໂຈມຕີຮາກຖານຂອງລະບົບຂ້າທາດ ແລະຖ້າພວກເຮົານຳໄປປະຕິບັດ ການຂົ່ມເຫັງຂ້າທາດ ຫລື ລູກຈ້າງ ຈະລົດລົງຢ່າງແນ່ນອນ. [...]

ຄຣິດສຕຽນ ສ້າງຄວາມຜູກພັນອັນແຂງແກ່ນລະຫວ່າງນາຍຈ້າງແລະລູກນ້ອງ, ກະສັດ ກັບປະຊາຊົນ, ຜູ້ເຜີຍພຣະວັດຈະນະ ແລະ ຜູ້ເຊື່ອ, ທຸກໆຄົນໄດ້ຮັບການຊຳລະລ້າງໃຫ້ສະອາດທັງໝົດໄດ້ ຍ້ອນໂລຫິດຂອງພຣະເຈົ້າອົງດຽວກັນ, ໄດ້ຮັບຊີວິດໃໝ່ໂດຍພຣະວິນຍານບໍຣິສຸດ ແລະກາຍເປັນໜຶ່ງດຽວກັນໃນພຣະເຢຊູຄຣິດ.

**EGW (The Acts of the Apostles, p. 460)**

# ຄວາມສຳພັນໃນຄຣິດຕະຈັກ

“ຈົ່ງອຸທິດຕົວໃນການພາວັນນາອະທິຖານ ຈົ່ງເຝົ້າລະວັງຢູ່ໂດຍການໂມທະນາຂອບພຣະຄຸນພຣະເຈົ້າ” (ກລຊ 4:2)





ພວກເຮົາໄດ້ໜູນໃຈໃຫ້ “ອະທິຖານເພື່ອກັນແລະກັນ” ເພາະວ່າ “ຄຳອະທິຖານຂອງຄົນຊອບທຳແມ່ນມີລິດເດດ ແລະ ມີຜົນ” (ຢກບ 5:16).

ນອກເໜືອຈາກການອະທິຖານໃນຕອນເຊົ້າ ແລະ ຕອນແລງແລ້ວ, ອຈ ໂປໂລ ສະເໜີແນະໃຫ້ພວກເຮົາອະທິຖານໃນທຸກເວລາ (ກລຊ 4:2; ອຟຊ 6:18; 1 ທສລນກ 5:17). ດັ່ງທີ່ທ່ານ ເນເຮມີຢາ ໄດ້ອະທິຖານ (ນຮມຢ 2:4), ພວກເຮົາມີສິດທິພິເສດທີ່ຈະອະທິຖານໃນສະຖານທີ່ ຫລື ສະຖານະການໃດກໍ່ໄດ້.

ຍິ່ງໄປກວ່ານັ້ນ ພວກເຮົາໝັ້ນໃຈໄດ້ວ່າ ພຣະວິນຍານບໍຣິສຸດ ຈະປ່ຽນແປງຄຳອະທິຖານຂອງພວກເຮົາໃຫ້ເກີດຜົນ (ໂຣມ. 8:26).

ອຈ ໂປໂລຂໍຮ້ອງເປັນພິເສດໃຫ້ພວກເຮົາອະທິຖານເພື່ອຜູ້ທີ່ປະກາດຂ່າວປະເສີດ (ກລຊ 4:3-4; ອຟຊ 6:19). ບໍ່ສຳຄັນວ່າຜູ້ປະກາດພຣະຄຳນັ້ນຈະມີປະສົບການໃນການປະກາດໜ້ອຍຫລືຫລາຍ; ບໍ່ມີໃຜສົມບູນສຳລັບວຽກນີ້. ອຈ ໂປໂລບໍ່ໄດ້ພຽງແຕ່ອະທິຖານດ້ວຍຕົນເອງເທົ່ານັ້ນ, ແຕ່ຍັງຂໍຮ້ອງໃຫ້ພີ່ນ້ອງທາງຄວາມເຊື່ອໄດ້ຊ່ວຍກັນອະທິຖານເພື່ອລາວພ້ອມ, ເພື່ອໃຫ້ຖ້ອຍຄຳອະທິຖານນັ້ນໄດ້ມີພະລັງຂຶ້ນຕື່ມ





“ໃນການປະກາດຂ່າວປະເສີດໃນທຸກໆສະຖານທີ່, ຈຳ ເປັນຕ້ອງມີການຜະສົມຜະສານຄວາມຄິດ, ຄວາມ ສາມາດ, ແຜນການ ແລະ ວິທີການເຮັດວຽກທີ່ແຕກ ຕ່າງກັນ. ທຸກຄົນຄວນປຶກສາຫາລື ແລະ ອະທິຖານ ຮ່ວມກັນ ພຣະເຢຊູຊົງກ່າວວ່າ: “ເມື່ອໃດສອງຄົນໃນ ພວກເຈົ້າຮ່ວມໃຈກັນຂໍສິ່ງໃດສິ່ງໜຶ່ງເທິງແຜ່ນດິນໂລກນີ້ ພຣະບິດາເຈົ້າຂອງເຮົາຜູ້ສະຖິດຢູ່ໃນສະຫວັນຈະເຮັດໃຫ້ ເປັນໄປຕາມນັ້ນ.” (ມທ 18:19)”

EGW (Selected Messages, vol. 3, p. 24)

# ຄວາມສຳພັນລະຫວ່າງຜູ້ເຊື່ອ ແລະ ຜູ້ບໍ່ເຊື່ອ

## "ຈົ່ງປະຕິບັດຕໍ່ຄົນພາຍນອກດ້ວຍໃຊ້ສະຕິປັນຍາໂດຍສວຍໂອກາດ (ກລຊ 4:5)



ພວກເຮົາໄດ້ຮັບປະໂຫຍດຫລາຍ: ພວກເຮົາໄດ້ຮຽນຮູ້ສິ່ງທີ່ພຣະເຢຊູຊົງເຮັດເພື່ອພວກເຮົາ; ພວກເຮົາໄດ້ຍອມຮັບເອົາສິ່ງນັ້ນແລ້ວ; ແລະພວກເຮົາກໍ່ມີຄວາມໝັ້ນໃຈໃນຄວາມລອດ.

ພວກເຮົາຮູ້ສິ່ງນີ້ເພາະວ່າບາງຄົນໄດ້ບອກພວກເຮົາ. ເຊັ່ນດຽວກັນພວກເຮົາຄົນແບ່ງປັນໃຫ້ກັບຄົນອື່ນ. ນີ້ແມ່ນວິທີທີ່ ອຈ ໂປໂລ ໄດ້ກ່າວໄວ້ວ່າພວກເຮົາຄົນປະຕິບັດແບບໃດກັບ "ຄົນນອກ" ຄົນທີ່ຍັງບໍ່ທັນໄດ້ຮັບເອົາພຣະເຢຊູເທື່ອ (ກລຊ 4:5-6)?



| | |
|---|---|
| ດ້ວຍສະຕິປັນຍາ | ພວກເຮົາຕ້ອງການ "ສະຕິປັນຍາຈາກສະຫວັນ" (ຢກບ 3:17) ເພື່ອສ້າງຄວາມສຳພັນຂອງພວກເຮົາໃຫ້ແກ່ຄົນທີ່ຍັງບໍ່ທັນຮູ້ຈັກກັບພຣະຄຣິດ |
| ດ້ວຍຄຳເວົ້າທີ່ໃຈດີ | ຄຳເວົ້າຂອງພວກເຮົາຄວນສຸພາບສະເໝີເພື່ອວ່າພວກເຂົາຈະຟັງດ້ວຍຄວາມຍິນດີ |
| ໃຊ້ຖ້ອຍຄຳທີ່ "ມີເກືອປະສົມ" | ການສົນທະນາຄວນເໝາະສົມ ແລະ ປັບໃຫ້ເຂົ້າກັບບຸກຄົນ ແລະ ສະຖານະການ |
| ຕອບຄຳຖາມແຕ່ລະຢ່າງດ້ວຍຄວາມເໝາະສົມ | ເນື່ອງຈາກແຕ່ລະຄົນແຕກຕ່າງກັນ ພຣະວິນຍານບໍຣິສຸດຈະຊົງນຳພວກເຮົາ ວ່າຈະເວົ້າ ຫລືຕອບແບບໃດໃນແຕ່ລະສະຖານະການ |

“ຄວາມສຸກທີ່ແທ້ຈິງ ທີ່ປະສົມປະສານກັບຄວາມຈິງແລະຄວາມຍຸຕິທຳ, ເຮັດໃຫ້ຊີວິດບໍ່ມີພຽງແຕ່ໄດ້ຮັບຜົນປະໂຫຍດເທົ່ານັ້ນ, ແຕ່ຍັງເຮັດໃຫ້ຊີວິດງົດງາມ ແລະ ຫອມຫວານ, ຄຳເວົ້າທີ່ອ່ອນໂຍນ, ສາຍຕາທີ່ເປັນຕາເບິ່ງ, ໃບໜ້າທີ່ລ່າເລີງ, ສ້າງສະເໜ່ໃຫ້ແກ່ຄຣິດສຕຽນ. ເຮັດໃຫ້ມີອິດທິພົນທີ່ຍາກທີ່ຈະຕ້ານທານ. ການຖ່ອມໂຕ, ແສງສະຫວ່າງ, ສັນຕິສຸກ ແລະ ຄວາມສຸກທີ່ມອບໃຫ້ແກ່ຜູ້ອື່ນຢ່າງຕໍ່ເນື່ອງນັ້ນ ພວກເຂົາຈະໄດ້ພົບກັບຄວາມສຸກທີ່ແທ້ຈິງ

ຂໍໃຫ້ພວກເຮົາຖ່ອມໃຈລົງຢູ່ສະເໝີ, ຄອຍໃຫ້ກຳລັງໃຈຜູ້ອື່ນ, ແບ່ງເບົາພາລະຂອງພວກເຂົາດ້ວຍການກະທຳທີ່ອ່ອນໂຍນ ແລະ ເມດຕາ ໂດຍການເສຍສະຫລະເພື່ອຜູ້ອື່ນ.”

EGW (In Heavenly Places, June 22)